**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ທະນາຄານແຫ່ງ ສປປ ລາວ

ຫ້ອງການ                                                                                    ເລກທີ 114 /ຫກ

ນະຄອນຫຼວງວຽງຈັນ, ວັນທີ 11 ພຶດສະພາ 2023

# ແຈ້ງການ

**ເຖິງ:** ພໍ່ແມ່ປະຊາຊົນ, ພໍ່ຄ້າຊາວຂາຍ, ພະນັກງານ, ທະຫານ, ຕຳຫຼວດ ແລະ ນັກຮຽນນັກສຶກສາ ໃນຂອບເຂດທົ່ວປະເທດ.

**ເລື່ອງ:** ເພີ່ມທະວີສະຕິລະວັງຕົວໃນການຮັບ-ຈ່າຍ ເງິນສົດ ປະເພດໃບ 100.000 ກີບ ລຸ້ນປີ 2011 ແລະ ປະເພດໃບ 50.000 ກີບ ລຸ້ນປີ 2004.

ຫ້ອງການທະນາຄານແຫ່ງ ສປປ ລາວ ຂໍຖືເປັນກຽດແຈ້ງມາຍັງ ພໍ່ແມ່ປະຊາຊົນ, ພໍ່ຄ້າຊາວຂາຍ, ພະນັກງານ, ທະຫານ, ຕຳຫຼວດ, ແລະ ນັກຮຽນນັກສຶກສາ ໃນຂອບເຂດທົ່ວປະເທດ ຊາບວ່າ: ປະຈຸບັນໄດ້ມີກຸ່ມຄົນບໍ່ດີຈຳນວນໜຶ່ງ ສວຍໃຊ້ລັກລອບປອມແປງເງິນສົດສະກຸນເງິນກີບ **ປະເພດໃບ 100.000 ກີບ ລຸ້ນປີ 2011 ແລະ ປະເພດໃບ 50.000 ກີບ ລຸ້ນປີ 2004**, ອອກມາຈໍລະຈອນໃຊ້ຈ່າຍໃນສັງຄົມ ດ້ວຍຮູບແບບການນຳເອົາເງິນແທ້ໄປອັດສຳເນົາສີ (Copy) ໃສ່ເຈ້ຍ A4 ທຳມະດາ ແລະ ໃຊ້ເຄື່ອງພິມ ໂດຍຄັດລອກ ຫຼື ຮຽນແບບຈາກເງິນແທ້ ພ້ອມທັງຕິດເສັ້ນນິລະໄພປອມໃສ່ໃນໃບເງິນປະເພດໃບ 100.000 ກີບ ລຸ້ນປີ 2011 ເຮັດໃຫ້ມີສີສັນລວດລາຍຄ້າຍຄືກັບເງິນແທ້ຫຼາຍຂຶ້ນ, ແລ້ວເອົາມາສັບປົນສອດໃສ່ກັບເງິນແທ້ ເພື່ອມາໃຊ້ຈ່າຍໃນຂອດຈໍລະຈອນ ຫຼື ໃຊ້ຈ່າຍຕາມທ້ອງຕະຫຼາດທົ່ວໄປ.

ສະນັ້ນ, ກ່ອນຈະຮັບ-ຈ່າຍເງິນສົດ **ປະເພດໃບ 100.000 ກີບ ລຸ້ນປີ 2011 ແລະ ປະເພດໃບ 50.000 ກີບ ລຸ້ນປີ 2004**, ທຸກໆຄັ້ງ ກະລຸນາກວດກາເບິ່ງໃຫ້ລະອຽດ ເພື່ອຫຼີກເວັ້ນການຮັບ-ຈ່າຍເງິນປອມ ແລະ ທ່ານສາມາດສັງເກດ ຫຼື ຈຳແນກ ເງິນແທ້-ເງິນປອມ ຂັ້ນພື້ນຖານດ້ວຍຕົວທ່ານເອງ ດັ່ງລາຍລະອຽດລຸ່ມນີ້:

**ເງິນແທ້**



**ເງິນປອມ**



**ເງິນແທ້ ປະເພດໃບ 100.000 ກີບ ລຸ້ນປີ 2011 ແລະ ປະເພດໃບ 50.000 ລຸ້ນປີ 2004**

❶ ຄຳຂວັນ: ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ຮູບພາບປະທານ ໄກສອນ ພົມວິຫານຢູ່ດ້ານໜ້າໃບເງິນ, ຕົວເລກ ຕົວເລກມູນຄ່າ **໑໐໐໐໐໐ ແລະ ໕໐໐໐໐** ຢູ່ດ້ານລຸ່ມ ເມື່ອເອົາມືສຳພັດ **ຈະຮູ້ສຶກສະດຸດມື.**

❷ ຮູບລາຍນໍ້າ ປະທານ ໄກສອນ ພົມວິຫານ ເປັນຮູບດຽວກັບຮູບທີ່ຢູ່ດ້ານໜ້າຂອງໃບເງິນ ຝັງຢູ່ໃນເນື້ອເຈ້ຍສາມາດເບິ່ງໄດ້ຊັດເຈນທັງດ້ານໜ້າ ແລະ ດ້ານຫຼັງ ເມື່ອຍົກສ່ອງໃສ່ກັບແສງສະຫວ່າງ.

**ເງິນປອມ ປະເພດໃບ 100.000 ກີບ ລຸ້ນປີ 2011 ແລະ ປະເພດໃບ 50.000 ລຸ້ນປີ 2004**

❶ ຄຳຂວັນ: ສາທາລະນະລັດ ປະຊາທິໄຕ ປະຊາຊົນລາວ, ຮູບພາບປະທານ ໄກສອນ ພົມວິຫານ ຢູ່ດ້ານໜ້າໃບເງິນ, ຕົວເລກມູນຄ່າ **໑໐໐໐໐໐ ແລະ ໕໐໐໐໐** ຢູ່ດ້ານລຸ່ມ ເມື່ອເອົາມືສຳພັດ **ຈະບໍ່ຮູ້ສຶກສະດຸດມື.**

❷ ຮູບລາຍນໍ້າ ປະທານ ໄກສອນ ພົມວິຫານ ເປັນຮູບພິມດ້ວຍມຶກສີດຽວ ຈະບໍ່ຝັງໃນເນື້ອເຈ້ຍ ຈະເຫັນເປັນຮູບແຕ້ມທຳມະດາ ເມື່ອຍົກສ່ອງໃສ່ກັບແສງສະຫວ່າງ.

❸ ສ່ອງໃສ່ແສງໄຟສີມ່ວງ **(Black Light)**

**ທະນະບັດແທ້**






**ທະນະບັດປອມ**






ເມື່ອນຳທະນະບັດ ສ່ອງໃສ່ແສງໄຟສີມ່ວງ **(Black Light)** ເຄື່ອງໝາຍຊາດ, ລາຍລາວ, ຮູບທາດຫຼວງ, ເສັ້ນນິລະໄພ ແລະ ຕົວໜັງສື ສປປ ລາວ, ຕົວເລກມູນຄ່າ **໑໐໐໐໐໐ ແລະ ໕໐໐໐໐** ຢູ່ດ້ານເທິງເບື້ອງຂວາຂອງໃບເງິນ, ເສັ້ນໄຍສັງເຄາະສີຟ້າ ແລະສີແດງ **ຈະເຮືອງແສງ.**

ເມື່ອນຳທະນະບັດ ສ່ອງໃສ່ແສງໄຟສີມ່ວງ **(Black Light)** ເຄື່ອງໝາຍຊາດ, ລາຍລາວ, ຮູບທາດຫຼວງ, ເສັ້ນນິລະໄພ ແລະ ຕົວໜັງສື ສປປ ລາວ, ຕົວເລກມູນຄ່າ **໑໐໐໐໐໐ ແລະ ໕໐໐໐໐** ຢູ່ດ້ານເທິງເບື້ອງຂວາຂອງໃບເງິນ, ເສັ້ນໄຍສັງເຄາະສີຟ້າ ແລະສີແດງ **ຈະບໍ່ເຮືອງແສງ.**

4. ການປອມແປງໃບເງິນ ຫຼື ການໃຊ້ເງິນປອມ ຈະມີຄວາມຜິດຕາມ ມາດຕາ 129 ຂອງປະມວນກົດໝາຍອາຍາ ສະບັບເລກທີ 26/ສພຊ, ລົງວັນທີ 17 ພຶດສະພາ 2017 ແລະ ກົດໝາຍກ່ຽວຂ້ອງ;

5. ຖ້າພົບເຫັນເງິນປອມ ຫຼື ການນຳໃຊ້ເງິນປອມເຂົ້າໃນການຊຳລະສະສາງຊື້ສິນຄ້າ ແລະ ບໍລິການ ໃນສະຖານທີ່ຕ່າງໆ ກະລຸນາແຈ້ງເຈົ້າໜ້າທີ່ຕຳຫຼວດ ຫຼື ທະນາຄານແຫ່ງ ສປປ ລາວ (ກົມພິມຈຳໜ່າຍ) 021 213109, ສາຂາທະນາຄານແຫ່ງ ສປປ ລາວ ແລະ ທະນາຄານທຸລະກິດ ທຸກແຫ່ງໃນຂອບເຂດທົ່ວປະເທດ.

ດັ່ງນັ້ນ, ຈິ່ງແຈ້ງມາເພື່ອຊາບ ແລະ ຈົ່ງມີສະຕິລະວັງຕົວໃນການຮັບ-ຈ່າຍເງິນສົດ ທັງສອງປະເພດໃບ ທີ່ກ່າວມາຂ້າງເທິງນັ້ນ.

**ຫົວໜ້າຫ້ອງການ**

ເພັດສະກາພອນ ແກ້ວວົງວິຈິດ